ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ...1863.../ຍທຂ.ສຂ

ສະຫວັນນະເຂດ, ວັນທີ... 12 ມີນາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

## ໂຄງການສຳຫຼວດ-ອອກແບບ ພັດທະນາແຄມຂອງນະຄອນໄກສອນ ແຂວງ ສະຫວັນນະເຂດ

## ຊ່ວງທີ2 ໄລຍະ 4 (ຕໍ່ຈາກຊ່ວງທີ 2 ໄລຍະ 3) ລວງຍາວ 2,000 ແມັດ

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1491/ສຂ, ລົງວັນທີ 10 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງ;
- ອີງຕາມ ແຈ້ງການ ຂອງພະແນກການເງິນແຂວງ ເລກທີ 452/ກງຂ ລົງວັນທີ 20 ກຸມພາ 2026; ກ່ຽວກັບ ແຜນການລົງທຶນຂອງລັດ ປະຈຳປີ 2025 (ບ້ວງປົກກະຕິ ໂຄງການປະເພດ V ມູນຄ່າ 50 ຕື້ກີບລົງມາ);

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈຳປີ 2026 ເພື່ອນຳໃຊ້ເຂົ້າໃນການປະຕິບັດ ໂຄງການສຳຫຼວດ-ອອກແບບ ພັດທະນາແຄມຂອງນະຄອນໄກສອນ ແຂວງ ສະຫວັນນະເຂດ ຊ່ວງທີ2 ໄລຍະ 4 ( ຕໍ່ຈາກຊ່ວງທີ 2 ໄລຍະ 3 ) ລວງຍາວ 2,000 ແມັດ, ສະນັ້ນ, ຈຶ່ງຂໍເຊີນບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມແຂ່ງຂັນປະມູນ ໂຄງການດັ່ງກາວ ລາຍລະອຽດມີ ດັ່ງນີ້:

1. ການປະມູນຈະດຳເນີນຕາມຂະບວນການ ແລະ ຂັ້ນຕອນການປະມູນເປີດກວ້າງພາຍໃນ ເຊິ່ງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
2. ການປະມູນແມ່ນອະນຸຍາດ ບໍລິສັດ ທີ່ມີເງື່ອນໄຂ ແລະ ມາດຖານ ດັ່ງນີ້:
   - ມີໃບທະບຽນວິສະຫະກິດ, ມີໃບອະນຸຍາດດຳເນີນທຸລະກິດ ສຳຫຼວດ-ອອກແບບ ທາງດ້ານວິສະວະກຳເປັນຕົ້ນ: ທາງນ້ຳ, ຂົວ-ທາງ ແລະ ຊົນລະປະທານ ປີ 2026;
   - ມີໃບຢັ້ງຢືນ ມອບພັນທະອາກອນ ປະຈຳປີ **2025** ທີ່ຖືກຕ້ອງຕາມ ຕາມລະບຽບການ;
   - ຜູ້ເຂົ້າຮ່ວມແຂ່ງຂັນຈະຕ້ອງຄ້ຳປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຢັ້ງຢືນຄ້ຳປະກັນ ອອກໂດຍທະນາຄານພາຍໃນ ເຊິ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫຼຸດ 2 % ຂອງມູນຄ່າທີ່ສະເໜີ, ມີສະພາບຄ່ອງທາງດ້ານການເງິນ, ມີວິຊາການທີ່ຊຳນານງານ, ມີປະສົບການໃນການ ສຳຫຼວດ-ອອກແບບ ເປັນຕົ້ນ: ທາງນ້ຳ, ຂົວ-ທາງ ແລະ ຊົນລະປະທານ;
3. ເອກະສານປະມູນພິວພັນເອົາໄດ້ ທີ່ຂະແໜງທາງນ້ຳ ພະແນກ ໂຍທາທິການ ແລະ ຂົນສົ່ງ ໃນໂມງລັດຖະການ, ລາຄາ 01 ຊຸດ **1,500,000** ກີບ (ໜຶ່ງລ້ານຫ້າແສນກີບ);
4. ເອກະສານປະມູນຕ້ອງສົ່ງເຖິງ ຂະແໜງທາງນ້ຳ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ, ກ່ອນເວລາປິດຮັບຊອງປະມູນ ໃນວັນທີ 07 ເມສາ **2026** ເວລາ **10** ໂມງ 00 ນາທີ ແລະ ຈະເປີດຊອງປະມູນ ໃນເວລາ **10** ໂມງ 15 ນາທີ ຂອງວັນດຽວກັນ, ທີ່ຫ້ອງປະຊຸມເບີ 02 ຊັ້ນ 03 ພະແນກ ຍທຂ ແຂວງ ໂດຍຊ່ອງໜ້າ ຄະນະກຳມະການ ປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ, ຊອງເອກະສານປະມູນໃດທີ່ສົ່ງຊ້າ ແມ່ນຈະບໍ່ໄດ້ຖືກຮັບພິຈາລະນາ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ສະຫວັນນະເຂດ

ຄຳພອງ ສິນວິຈິດ